ການສືບສວນຂອງພະແນກປ້ອງກັນຜູ້ໃຫຍ່ (APS)
ເຈ້ຍຄວາມຈິງ

Adult Protective Services (APS) Investigations
Fact Sheet

ພະແນກປ້ອງກັນຜູ້ໃຫຍ່ (APS) ກຳລັງທຳການສືບສວນລາຍງານວ່າທ່ານອາດຈະໄດ້ກົດຂີ່ຂົ່ມເຫັງ, ປ່ອຍປະຖິ້ມ, ຫາຜົນປະໂຍດດ້ານການເງິນ, ຫລື ປ່ອຍປະລະເລີຍຜູ້ໃຫຍ່ທີ່ອ່ອນແອ. ເອກສານອັນນີ້ແຈ້ງບອກທ່ານກ່ຽວກັບວິທີດຳເນີນການຂອງການສືບສວນ, ສິດທິຂອງທ່ານ, ແລະ ຣາຍຣະອຽດສຳຄັນອື່ນໆ. ໃນຖານະເປັນສ່ວນນຶ່ງຂອງການສືບສວນ, ພະແນກ APS ຈະກວດເບິ່ງບັນທຶກຄືນ ແລະ ສຳພາດຜູ້ຄົນກ່ຽວກັບການກ່າວຫາ.

ຜົນອອກມາຂອງການສືບສວນສາມາດມີຜົນສະທ້ອນຮ້າຍແຮງສຳລັບທ່ານ.
ກະຣຸນາອ່ານຢ່າງລະມັດລະວັງ.

ຜູ້ສືບສວນທີ່ຖືກແຕ່ງຕັ້ງໃສ່ສຳນວນເອກສານຂອງທ່ານແມ່ນ:
ເຂົາເຈ້ົາສາມາດຖືກຕິດຕໍ່ຫາໄດ້ທີ່:

ສິດທິແນວໃດແດ່ທີ່ຂ້ອຍມີຢູ່?

- ທ່ານມີສິດທິທີ່ຈະໃຫ້ພາກສ່ວນທີສາມ (ເຊັ່ນວ່າຫມູ່ເພື່ອນ, ທະນາຍຄວາມ, ຜູ້ຕາງໜ້າຢູນຽນ, ສະມາຊິກຄອບຄົວ, ຫລື ຜູ້ປົກຄອງ) ຢູ່ນຳທ່ານໃນເວລາການສຳພາດ.
- ຖ້າຫາກວ່າພາສາອັງກິດບໍ່ແມ່ນພາສາທຳອິດຂອງທ່ານ, ທ່ານມີສິດທີ່ຈະໄດ້ນາຍແປພາສາຟຣີ (ພະແນກ APS ບໍ່ອະນຸຍາດໃຫ້ໃຊ້ສະມາຊິກຂອງຄອບຄົວໃຫ້ເປັນນາຍແປພາສາ).
- ທ່ານມີສິດທິທີ່ຈະບໍ່ເຂົ້າຮ່ວມນຳໃນການສຳພາດ, ທີ່ຈະຢຸດ, ຫລື ເຣັດຫມາຍນັດໃຫມ່.
- ທ່ານມີສິດທິທີ່ຈະເອົາເອກສານໃຫ້ພະແນກ APS ຫລື ພະຍານທີ່ກ່ຽວພັນນຳການກ່າວຫາ.

ພະແນກ APS ຈະແຈ້ງບອກຂ້ອຍໄດ້ແນວໃດກ່ຽວກັບຜົນອອກມາຂອງການສືບສວນ?

- ພະແນກ APS ທຳການຕັດສິນອີງໃສ່ຫລັກຖານທີ່ພະແນກ APS ໄດ້ເກັບກຳມາໃນຣະຫວ່າງການສືບສວນ. ຊະນິດຂອງການຕັດສິນທີ່ພະແນກ APS ຈະເຣັດແມ່ນ:
  - **ຖືກພິສູດຢືນຢັນ:** ຄ້າຍຄືຫລາຍກວ່າບໍ່ແມ່ນທີ່ເຫດການທີ່ຖືກກ່າວຫາໄດ້ເກີດຂຶ້ນ.
  - **ບໍ່ຖືກພິສູດຢືນຢັນ:** ຄ້າຍຄືຫລາຍກວ່າບໍ່ແມ່ນທີ່ເຫດການທີ່ຖືກກ່າວຫາບໍ່ໄດ້ເກີດຂຶ້ນ.
  - **ລົງຄວາມເຫັນບໍ່ໄດ້:** ບໍ່ສາມາດທີ່ຈະພິຈາຣະນາໄດ້ວ່າເຫດການທີ່ຖືກກ່າວຫາໄດ້ເກີດຂຶ້ນຫລືບໍ່.
- ຖ້າຫາກວ່າ APS ພົບເຫັນວ່າມັນຄ້າຍຄືຫລາຍກວ່າບໍ່ແມ່ນທີ່ເຫດການໄດ້ເກີດຂຶ້ນ. APS ຈະແຈ້ງບອກທ່ານໂດຍການສົ່ງຫນັງສືໄປຫາທ່ານໂດຍທາງໄປສະນີຢັ້ງຢືນ ຫລື ທັມມະດາ.
- ຖ້າຫາກວ່າ APS ພົບເຫັນວ່າມັນຄ້າຍຄືຫລາຍກວ່າບໍ່ແມ່ນທີ່ເຫດການບໍ່ໄດ້ເກີດຂຶ້ນ APS ຈະແຈ້ງບອກທ່ານໂດຍທາງປາກເປົ່າ. ພະແນກ APS ສາມາດເອົາຫນັງສືໃຫ້ທ່ານຖ້າຫາກວ່າທ່ານຖາມເອົາ.
- ຖ້າຫາກວ່າ APS ບໍ່ສາມາດພິຈາຣະນາເບິ່ງວ່າເຫດການໄດ້ເກີດຂຶ້ນຫລືບໍ່, APS ຈະແຈ້ງບອກທ່ານໂດຍທາງປາກເປົ່າ. APS ສາມາດເອົາຫນັງສືໃຫ້ທ່ານຖ້າຫາກວ່າທ່ານຖາມເອົາ.
- ຖ້າຫາກວ່າ APS ບໍ່ມີທີ່ຢູ່ປັດຈຸບັນຂອງທ່ານ. ເຂົາເຈ້ົາຈະສົ່ງຫນັງສືໄປຫາທີ່ຢູ່ຜິດ, ແລະ ທ່ານອາດຈະພາດວັນຕາຍໂຕທີ່ສຳຄັນ.

ການຄົ້ນພົບທີ່ຖືກພິສູດຢືນຢັນຫມາຍຄວາມວ່າແນວໃດ?

ຖ້າຫາກວ່າ APS ຕັດສິນວ່າການກ່າວຫາກ່ຽວກັບການກົດຂີ່ຂົ່ມເຫັງ, ປ່ອຍປະລະເລີຍ, ປ່ອຍປະຖິ້ມ, ຫລື ຫາຜົນປະໂຍດດ້ານການເງິນໄດ້ **"ຖືກພິສູດຢືນຢັນ",** ທ່ານສາມາດຮ້ອງຂໍເອົາການຟັງເຣື່ອງໄດ້ຖ້າຫາກວ່າທ່ານບໍ່ເຫັນພ້ອມນໍາການຄົ້ນພົບ. ຖ້າຫາກວ່າຄໍາຕັດສິນຂອງ APS ໄດ້ຖືກເຫັນພ້ອມນໍາໃນຂັ້ນທ້າຍຂອງວິທີດໍາເນີນການຟັງເຣື່ອງ, ຊື່ຂອງທ່ານຈະຖືກວາງໃສ່ໃນທະບຽນ.

ການມີຊື່ຢູ່ໃນທະບຽນຫມາຍຄວາມວ່າທ່ານອາດຈະບໍ່ສາມາດທີ່ຈະເຮັດວຽກ ຫລື ອາສາສະມັກນໍາບ່ອນໃດບ່ອນນຶ່ງໄດ້ທີ່ທ່ານອາດຈະມີການຕິດຕໍ່ທີ່ບໍ່ຖືກຄວບຄຸມເບິ່ງນໍາຜູ້ໃຫຍ່ ຫລື ເດັກນ້ອຍທີ່ອ່ອນແອ. ໃນປັດຈຸບັນນີ້, ມັນບໍ່ມີທົນທາງແນວໃດເລີຍທີ່ຈະເອົາຊື່ຂອງທ່ານອອກຈາກທະບຽນໄດ້.

ຂ້ອຍສາມາດຄັດຄ້ານການຕັດສິນຂອງພະແນກ **APS** ໄດ້ບໍ?

- ຖ້າຫາກວ່າ APS ຕັດສິນວ່າເຫດການທີ່ຖືກກ່າວຫາແມ່ນ **ບໍ່ຖືກພິສູດຢືນຢັນ** ຫລື **ລົງຄວາມເຫັນບໍ່ໄດ້** ທ່ານບໍ່ຕ້ອງເຮັດຫຍັງຫມົດ.
- ຖ້າຫາກວ່າ APS ຕັດສິນວ່າເຫດການທີ່ຖືກກ່າວຫາແມ່ນ **ຖືກພິສູດຢືນຢັນ** ແລະທ່ານບໍ່ເຫັນພ້ອມນໍາຕັດສິນ ທ່ານຈະຮ້ອງຂໍເອົາການຟັງເຣື່ອງໄດ້. ຫນັງສືຂອງ APS ຈະບອກທ່ານວ່າຈະເຮັດແນວໃດ.

ເພື່ອຈະຮ້ອງຂໍເອົາການຟັງເຣື່ອງ,ທ່ານມີເວລາພຽງແຕ່ຮອດ 5:00 ໂມງແລງໃນວັນທີ 30th ຕາມປະຕິທິນເທົ່ານັ້ນຫລັງຈາກວັນທີທີ່ໃບຫນັງສືແຈ້ງການຂອງກົມໄດ້ຖືກສົ່ງອອກໄປ ຫລື ສົ່ງໃຫ້ທ່ານໂດຍຕົນເອງ,ບໍ່ວ່າວັນໃດມາຮອດກ່ອນ.

ເພື່ອຣາຍຣະອຽດເພີ້ມເຕີມ

ທ່ານສາມາດໄດ້ຣາຍຣະອຽດເພີ້ມເຕີມກ່ຽວກັບພະແນກ APS ໄດ້ທາງອອນລາຍນ໌ທີ່ https://www.dshs.wa.gov/altsa/adult-protective-services-aps.